ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
INEWS
ຂ່າວ
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ທຫລ.ຊຂ ສ້າງຂະບວນການຮ່ວມກັບ ອົງການໄອຍະການປະຊາຊົນ ແຂວງຊຽງຂວາງ



ໃນວັນທີ 05 ມີນາ 2020 ທະນາຄານແຫ່ງ ສປປ ລາວ ສາຂາ ພາກເໜືອ ແຂວງຊຽງຂວາງ (ທຫລ.ຊຂ) ແລະ ອົງການໄອຍະການປະຊາຊົນ ແຂວງຊຽງຂວາງ (ອຍກຂ) ສ້າງຂະບວນການກິລາ ຂໍ່ານັບຮັບຕ້ອນ ວັນທີ 08 ມີນາ ວັນແມ່ຍິງສາກົນ ທີ່ເດີ່ນກິລາ ເອສທີ (ST Stadium) ບ້ານປອນ, ເຂົ້າຮ່ວມໂດຍມີ ທ່ານ ວິສອນ ໄຊສົງຄາມ ຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາ ພາກເໜືອ ແຂວງຊຽງຂວາງ, ມີ ທ່ານ ຈັນໄຄ ສຸທິຈັກ ຫົວໜ້າອົງການໄອຍະການປະຊາຊົນ ແຂວງຊຽງຂວາງ, ມີຕາງໜ້າສາມອົງການຈັດຕັ້ງມະຫາຊົນ, ມີພະນັກງານງານຈາກ ອົງການໄອຍະການປະຊາຊົນ ແຂວງຊຽງຂວາງ ແລະ ທຫລ.ຊຂ ເຂົ້າຮ່ວມຫຼາຍກວ່າ 50 ທ່ານ.



ຈຸດປະສົງໃນການສ້າງຂະບວນການໃນຄັ້ງນີ້ ກໍ່ເພື່ອເສີມສ້າງສຸຂະພາບ, ມິດຕະພາບ, ຮັດແໜ້ນ ຄວາມສາມັກຄີ ລະຫວ່າງ ອົງການໄອຍະການປະຊາຊົນ ແຂວງຊຽງຂວາງ ກັບ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ເນື່ອງໃນໂອກາດຂ່ຳນັບຮັບຕ້ອນ ວັນແມ່ຍິງສາກົນ ຄົບຮອບ 110 ປີ (ວັນທີ 08/02/1910 – 08/03/2020) ທີ່ຈະໄດ້ໝູນວຽນມາບັນຈົບຄົບຮອບອີກວາລະໜຶ່ງ ໃຫ້ມີ ບັນຍາກາດເບີກບານມ່ວນຊື່ນ.






ກິດຈະກຳດັ່ງກ່າວປະກອບມີ ກິລາ ບານເຕະ ທີມຊາຍ-ທີມຍິງ ເຊິ່ງການແຂ່ງຂັນເປັນຢ່າງຟົດຟື້ນ, ມິດຕະພາບ ແລະ ເຕັມໄປດ້ວຍບັນຍາກາດເບີກບານມ່ວນຊື່ນ ເຊິ່ງຕ່າງຝ່າຍກໍ່ໃຊ້ເຕັກນິກບຸກເຂົ້າຫາກັນ ເພື່ອຫວັງຍິງປະຕູຄູ່ຕໍ່ສູ້, ຈົບການແຂ່ງຂັນ ແລະ ສາມາດສະຫຼຸບໄດ້ດັ່ງນີ້: ທີມ (ຊາຍ) ຂອງ ທຫລ.ຊຂ ສະເໝີ ທີມອົງການໄອຍະການປະຊາຊົນ ແຂວງຊຽງຂວາງ ດ້ວຍ 09 ຕໍ່ 09 ປະຕູ; ທີມ (ຍິງ) ທຫລ.ຊຂ ຊະນະ ທີມອົງການໄອຍະການປະຊາຊົນ ແຂວງຊຽງຂວາງ ດ້ວຍ 07 ຕໍ່ 02 ປະຕູ.

**✍ ຂ່າວ + ພາບ : ສຸກສະຫວັນ ພົມມະວົງ**